# ທ່ານຕ້ອງການທັກສະໃໝ່ເພື່ອມີວຽກເຮັດບໍ?

## ນຳໃຊ້ກັບໂປຣແກຣມໂອກາດຝຶກອົບຮົມ(TOP)



ໂປຣແກຣມໂອກາດການຝຶກອົບຮົມ (ເອີ້ນສັ້ນໆວ່າ TOP) ອະນຸຍາດໃຫ້ທ່ານເກັບເອົາເງິນຊ່ວຍເຫຼືອການຫວ່າງງານໃນຂະນະທີ່ທ່ານເຂົ້າຮ່ວມການຝຶກອົບຮົມເຕັມເວລາສຳລັບທັກສະການເຮັດວຽກໃໝ່.

ຖ້າທ່ານມີຄຸນສົມບັດເຂົ້າຮ່ວມທ່ານກໍ່ສາມາດ:

- ເກັບເອົາເງິນຊ່ວຍເຫຼືອການຫວ່າງງານ, ***ໂດຍບໍ່*** ຈຳເປັນຕ້ອງຄົ້ນຫາວຽກເຮັດ, ແລະ
- ຂະຫຍາຍເງິນຊ່ວຍເຫຼືອການຫວ່າງງານຂອງທ່ານສູງເຖິງ 26 ອາທິດ.

## ໃຜແດ່ສາມາດຢູ່ໃນໂປຣແກຣມ TOP?

ທ່ານອາດຈະມີຄຸນສົມບັດເຂົ້າຮ່ວມ ຖ້າ:

- ທ່ານບໍ່ໄດ້ເຮັດວຽກໃຫ້ອະດີດນາຍຈ້າງຂອງທ່ານອີກຕໍ່ໄປ
- ທ່ານໄດ້ຍື່ນການຂໍເງິນ ແລະມີສິດໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານ
- ມັນຈະຫຍຸ້ງຍາກສຳລັບທ່ານທີ່ຈະໄດ້ວຽກໃໝ່ ຖ້າທ່ານບໍ່ມີທັກສະໃໝ່
- ທ່ານມີທັກສະເພື່ອເຮັດສຳເລັດ ແລະໄດ້ປະໂຫຍດຈາກການຝຶກອົບຮົມທີ່ອະນຸມັດ
- ໂປຣແກຣມການຝຶກອົບຮົມຂອງທ່ານແມ່ນເຕັມເວລາ ແລະໄດ້ຮັບອະນຸມັດໂດຍໜ່ວຍງານ TOP

## ມີກຳນົດເວລາໃນການສະໝັກບໍ?

ທ່ານຕ້ອງສະໝັກໃນລະຫວ່າງ 20 ອາທິດທຳອິດທີ່ທ່ານໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານ.

**ຄຳແນະນຳ:** ສະໝັກເຂົ້າຮ່ວມໂປຣແກຣມ TOP ໃນທັນທີທີ່ ທ່ານຮູ້ວ່າທ່ານມີສິດໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານ **ແລະ** ມີຫຼັກສູດການຝຶກອົບຮົມ.

## ທ່ານສາມາດເລືອກເອົາການຝຶກອົບຮົມປະເພດໃດ?

ເລືອກໂປຣແກຣມການຝຶກອົບຮົມທີ່ຈະໃຫ້ທັກສະດ້ານການເຮັດວຽກທີ່ເປັນທີ່ຕ້ອງການແກ່ທ່ານ.

ທ່ານສາມາດເລືອກເອົາການຝຶກອົບຮົມສຳລັບວຽກເຮັດທີ່ເປັນທີ່ຕ້ອງການຢູ່ບ່ອນທີ່ທ່ານອາໄສຢູ່ດຽວນີ້ ຫຼືຢູ່ບ່ອນອື່ນທີ່ທ່ານເດີນໄປມາ ຫຼືຈະຍ້າຍໄປ.

ຮຽນຮູ້ເພີ່ມຕື່ມກ່ຽວກັບຕະຫຼາດແຮງງານ ແລະວຽກໃດແດ່ທີ່ເປັນທີ່ຕ້ອງການ ທີ່: **www.mass.gov/lmi**.

## ການຝຶກອົບຮົມຟຣີບໍ?

ບໍ່. ທ່ານຕ້ອງຈ່າຍຄ່າຝຶກອົບຮົມ ຫຼືທຶນການສຶກສາ ຫຼືເງິນຊ່ວຍເຫຼືອລ້າທີ່ສາມາດຊ່ວຍທ່ານຈ່າຍ.

ລຸ່ມນີ້ແມ່ນບາງແຫຼ່ງຄວາມຊ່ວຍເຫຼືອດ້ານການເງິນ:

- **ສູນອາຊີບປະຕູດຽວເມືອງ Massachusetts:** ໄປຫາສູນໃນເຂດທ້ອງຖິ່ນຂອງທ່ານ. ຮ້ອງຂໍໃຫ້ຜູ້ຊ່ຽວຊານດ້ານວຽກເຮັດຊ່ວຍທ່ານຊອກຫາເງິນຊ່ວຍເຫຼືອລ້າ ຫຼືເງິນກູ້.
- **ການຊ່ວຍເຫຼືອດ້ານການເງິນຂອງລັດຖະບານກາງ:** ເພື່ອຊອກຮູ້ວ່າທ່ານມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນຫຼືບໍ່ ລວມທັງເງິນຊ່ວຍເຫຼືອລ້າ Pell ຈຳນວນສູງເຖິງ $5350, ແລະເງິນຊ່ວຍເຫຼືອລ້າ ແລະເງິນກູ້ອື່ນໆ ປະກອບ **ຄຳຮ້ອງສະໝັກຟຣີເພື່ອຂໍເງິນຊ່ວຍເຫຼືອນັກຮຽນຈາກລັດຖະບານກາງ (FAFSA)**.
- ຖ້າທ່ານມີລະດັບການສຶກສາວິທະຍາໄລ 4 ປີແລ້ວ, ທ່ານຈະບໍ່ມີສິດໄດ້ຮັບເງິນຊ່ວຍເຫຼືອລ້າ Pell ແຕ່ທ່ານອາດຈະມີສິດໄດ້ຮັບການຊ່ວຍເຫຼືອປະເພດອື່ນ
- ເຂົ້າ **www.opportunity.gov** ເພື່ອຊອກຂໍ້ມູນກ່ຽວກັບການຊ່ວຍເຫຼືອດ້ານການເງິນ ແລະເຄື່ອງມືເພື່ອຊ່ວຍທ່ານສຳຫຼວດເບິ່ງອາຊີບ ແລະທາງເລືອກຕ່າງໆ.

## ຂ້ອຍຮູ້ໄດ້ແນວໃດວ່າໂປຣແກຣມຂອງຂ້ອຍໄດ້ຮັບອະນຸມັດຫຼືບໍ່?

ທ່ານສາມາດຊອກຮູ້ວ່າການຝຶກອົບຮົມໃດແດ່ໄດ້ຮັບອະນຸມັດຈາກ DUA ໂດຍການ:

- ໂທຫາໜ່ວຍງານ TOP ທີ່ໝາຍເລກ 617-626-5521, ຫຼື
- ເຂົ້າຫາສູນອາຊີບປະຕູດຽວໃດໜຶ່ງໃນເມືອງ Massachusetts, ຫຼື
- ຄົ້ນຫາຢູ່ **www. mass.gov/jobquest**

ໂປຣແກຣມທີ່ທ່ານເລືອກຕ້ອງແມ່ນໂປຣແກຣມຝຶກອົບຮົມວິຊາຊີບ, ເຕັກນິກ ຫຼືທັກສະຂັ້ນພື້ນຖານແບບລະອຽດເຕັມເວລາ ທີ່ທ່ານສາມາດເຮັດສຳເລັດພາຍໃນ 2 ປີ. ນອກນັ້ນໂປຣແກຣມຝຶກອົບຮົມດັ່ງກ່າວຍັງຄວນ:

- ໃຫ້ໂອກາດດ້ານການບັນຈຸເຂົ້າເຮັດວຽກສຳລັບສາຂາອາຊີບສະເພາະແກ່ທ່ານກ່ອນທີ່ການຝຶກອົບຮົມຈະສິ້ນສຸດ,
- ມີຄວາມສຳເລັດທີ່ພິສູດມາແລ້ວໃນການບັນຈຸຜູ້ຝຶກອົບຮົມທີ່ຄ້າຍຄືກັນເຂົ້າເຮັດວຽກ, ແລະ
- ສະໜອງຫຼັກຖານທີ່ການຝຶກອົບຮົມຈະຊ່ວຍໃຫ້ທ່ານໄດ້ຮັບວຽກເຮັດໃໝ່.

| ປະເພດໂປຣແກຣມ | ຂັ້ນຕ່ຳສຸດ |
|---|---|
| ການຝຶກອົບຮົມວິຊາຊີບ/ອຸດສາຫະກຳ | 20 ຊົ່ວໂມງຮຽນຂຶ້ນໄປຕໍ່ອາທິດທີ່ມີການຕິດຕາມຄວບຄຸມ ເບິ່ງ: **www.mass.gov/dpl** |
| ການຝຶກອົບຮົມຢູ່ໃນໂຮງຮຽນ ຫຼືວິທະຍາໄລ | 12 ໜ່ວຍກິດຕໍ່ພາກຮຽນຢູ່ໂຮງຮຽນ ຫຼືວິທະຍາໄລ ທີ່ມີໃບອະນຸຍາດຈາກພະແນກສຶກສາລັດ ເບິ່ງ: **www.mass.edu** |
| ການຝຶກອົບຮົມແບບການຮຽນທາງໄກ | 12 ໜ່ວຍກິດຕໍ່ອາທິດ ຫຼື 20 ຊົ່ວໂມງຕໍ່ອາທິດ – ***ບໍ່ສາມາດຮຽນດ້ວຍຕົນເອງ, ຕ້ອງປະຕິບັດຕາມຫຼັກສູດການຮຽນທີ່ຕັ້ງໄວ້*** |
| ການຝຶກງານ ຫຼືການຝຶກປະສົບການ | 20 ຊົ່ວໂມງຂຶ້ນໄປຕໍ່ອາທິດ, ຖ້າມັນແມ່ນສ່ວນໜຶ່ງຂອງຫຼັກສູດການຮຽນການສອນທີ່ຕັ້ງໄວ້ |
| | ໂທຫາໜ່ວຍງານ TOP ເພື່ອເບິ່ງວ່າໂປຣແກຣມຂອງທ່ານມີຄຸນສົມບັດຫຼືບໍ່ຖ້າມັນແມ່ນ:<br>• ການຮຽນເປັນຊ່ວງໄລຍະ, ການຝຶກງານ ຫຼືຝຶກປະສົບການເປັນຊ່ວງໄລຍະ<br>• ໂປຣແກຣມສຳລັບຜູ້ບໍ່ທັນຈົບປະລິນຍາ ຫຼືຜູ້ຈົບປະລິນຍາ. |

**www.mass.gov/dua/top**
**617-626-5521**

ແບບຟອມ 1938 ປັບປຸງ. 08-16 Laotian

**ສະຫະພັນລັດ Massachusetts**
**ສຳນັກງານແຮງງານ ແລະການພັດທະນາສີມືແຮງງານ**
**ພະແນກຊ່ວຍເຫຼືອການຫວ່າງງານ**

## ຈະເປັນແນວໃດຖ້າທ່ານຕ້ອງການການຝຶກອົບຮົມທັກສະພື້ນຖານກ່ອນ?

ທ່ານອາດຈະຕ້ອງການທັກສະພື້ນຖານກ່ອນທີ່ທ່ານສາມາດດຳເນີນໂປຣແກຣມການຝຶກອົບຮົມໃດໜຶ່ງ ຕົວຢ່າງ ທ່ານອາດຈະຕ້ອງການ:

- ປັບປຸງທັກສະການອ່ານ, ການຂຽນ ຫຼືວິຊາເລກ,
- ຮຽນພາສາອັງກິດຖ້າມັນບໍ່ແມ່ນພາສາທຳອິດຂອງທ່ານ, ຫຼື
- ກະກຽມການສອບເສັງທຽບເທົ່າອຸດົມ ຖ້າທ່ານຮຽນບໍ່ຈົບອຸດົມ.

ຖ້າທ່ານຕ້ອງການທັກສະໃດໜຶ່ງເຫຼົ່ານີ້, ແຜນການວິຊາຊີບຂອງທ່ານຈະລວມມີຫ້ອງຮຽນຈາກໜຶ່ງ ຫຼືຫຼາຍຂົງເຂດເຫຼົ່ານີ້:

- ພາສາອັງກິດເປັນພາສາທີສອງ,
- ການສຶກສາຂັ້ນພື້ນຖານສຳລັບຜູ້ໃຫຍ່ (ABE), ຫຼື
- ໃບປະກາດທຽບເທົ່າຈົບຊັ້ນອຸດົມ (GED)

TOP ອະນຸຍາດໃຫ້ຜູ້ຂໍເງິນຊ່ວຍເຫຼືອທີ່ຕ້ອງການທັກສະພື້ນຖານມີເວລາ 3 ປີເພື່ອເຮັດສຳເລັດໂປຣແກຣມຝຶກອົບຮົມຂອງເຂົາເຈົ້າ. ສິ່ງນັ້ນໃຫ້ທ່ານມີເວລາເພີ່ມເຕີມເພື່ອຮຽນທັກສະພື້ນຖານທີ່ທ່ານຈຳເປັນຕ້ອງມີໄປພ້ອມກັບການຝຶກອົບຮົມວິຊາຊີບ ຫຼືເຕັກນິກ.

***ສຳຄັນ!*** ໄລຍະການມີສິດໄດ້ຮັບເງິນຊ່ວຍເຫຼືອຂອງທ່ານບໍ່ປ່ຽນແປງ.

## ຂ້ອຍສາມາດສະໝັກໄດ້ແນວໃດ?

ເພື່ອສະໝັກເຂົ້າຮ່ວມ TOP ແລະເພື່ອຂະຫຍາຍໄລຍະເງິນຊ່ວຍເຫຼືອການຫວ່າງງານຂອງທ່ານ, ຈົ່ງປະຕິບັດຕາມບາດກ້າວເຫຼົ່ານີ້:

1. ຊອກໂປຣແກຣມການຝຶກອົບຮົມທີ່ໄດ້ຮັບອະນຸມັດ ທີ່ຈະກະກຽມຕົວທ່ານສຳລັບຕະຫຼາດວຽກເຮັດ. ວິທີທີ່ດີສຸດໃນການເຮັດສິ່ງນີ້ແມ່ນ:
   - ເຂົ້າຫາສູນອາຊີບປະຕູດຽວໃດໜຶ່ງໃນລັດ Massachusetts, ຫຼື
   - ຊອກຫາທີ່: **www.mass.gov/jobquest**

2. ໂທຫາໜ່ວຍງານ TOP ເພື່ອຂໍເອົາຄຳຮ້ອງສະໝັກ: 617-626-5521

3. ປະກອບຂໍ້ມູນໃນຄຳຮ້ອງສະໝັກທີ່ເປັນສ່ວນຂອງທ່ານ. ຮ້ອງຂໍໃຫ້ໂປຣແກຣມຝຶກອົບຮົມຕື່ມຂໍ້ມູນໃນສ່ວນຂອງເຂົາເຈົ້າ.

4. ສົ່ງຄຳຮ້ອງສະໝັກທີ່ເຮັດສຳເລັດແລ້ວຫາໜ່ວຍງານ TOP ຂອງພະແນກ DUA ຢ່າງນ້ອຍ ***3 ອາທິດ ກ່ອນ***ທີ່ໂປຣແກຣມຂອງທ່ານຈະເລີ່ມຕົ້ນ

ຖ້າທ່ານບໍ່ໄດ້ຍິນຈາກ TOP ພາຍໃນ 3-4 ອາທິດຫຼັງຈາກການສະໝັກ, ຈົ່ງໂທຫາ: **617-626-5521**.

## ຕ້ອງການຄວາມຊ່ວຍເຫຼືອໃນການເລືອກໂປຣແກຣມການຝຶກອົບຮົມບໍ?

ເຂົ້າຫາສູນອາຊີບປະຕູດຽວບ່ອນທີ່ພະນັກງານສາມາດຊ່ວຍທ່ານຊອກຫາການຝຶກອົບຮົມທີ່ເໝາະສົມສຳລັບທ່ານ.

ພະນັກງານສູນອາຊີບຍັງສາມາດ:

- ປະເມີນທັກສະດ້ານວຽກເຮັດຂອງທ່ານ,
- ເອົາລາຍຊື່ໂປຣແກຣມການຝຶກອົບຮົມທີ່ໄດ້ຮັບອະນຸຍາດໃຫ້ທ່ານ,
- ບອກທ່ານວ່າທ່ານສາມາດເຮັດສຳເລັດການຝຶກອົບຮົມກ່ອນທີ່ເງິນຊ່ວຍເຫຼືອການຫວ່າງງານຂອງທ່ານຈະໝົດໄປ,
- ອະທິບາຍທາງເລືອກຕ່າງໆສຳລັບການຈ່າຍຄ່າຝຶກອົບຮົມ, ແລະ
- ຊ່ວຍທ່ານປະກອບຂໍ້ມູນໃນຄຳຮ້ອງສະໝັກຂອງ TOP.

## ຂ້ອຍສາມາດສູນເສຍເງິນຊ່ວຍເຫຼືອ TOP ຂອງຂ້ອຍໃນລະຫວ່າງການຝຶກອົບຮົມແມ່ນບໍ່?

ແມ່ນ. ທ່ານສາມາດສູນເສຍເງິນຊ່ວຍເຫຼືອຂອງທ່ານໄດ້ ຖ້າທ່ານ:

- ຢຸດການຮ້ອງຂໍເອົາເງິນຊ່ວຍເຫຼືອການຫວ່າງງານປະຈຳອາທິດຂອງທ່ານ,
- ທ່ານບໍ່ປະຕິບັດຕາມຂໍ້ກຳນົດຂອງໂປຣແກຣມຝຶກອົບຮົມຂອງທ່ານ,
- ຢຸດໂປຣແກຣມການຝຶກອົບຮົມກ່ອນທີ່ທ່ານເຮັດສຳເລັດມັນ, ຫຼື
- ດຳເນີນຫຼາຍກວ່າໜຶ່ງໂປຣແກຣມການຝຶກອົບຮົມໃນເວລາດຽວກັນ (ເວັ້ນເສຍແຕ່ວ່າໂປຣແກຣມອື່ນນັ້ນແມ່ນສຳລັບທັກສະພື້ນຖານ).

ຖ້າທ່ານກຳລັງໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານສ່ວນຂະຫຍາຍຂອງ TOP ໃນເວລາທີ່ການຝຶກອົບຮົມຂອງທ່ານສິ້ນສຸດ ເງິນຊ່ວຍເຫຼືອ TOP ຂອງທ່ານຈະສິ້ນສຸດໃນອາທິດສຸດທ້າຍຂອງໂປຣແກຣມຝຶກອົບຮົມຂອງທ່ານ.

***ສຳຄັນ!*** ຖ້າທ່ານກຳລັງມີບັນຫາກັບໂປຣແກຣມຝຶກອົບຮົມ, ຈົ່ງຕິດຕໍ່ຫາ TOP ໃນທັນທີ. ໂທຫາ: **617-626-5521**.

## ຖ້າໂປຣແກຣມຝຶກອົບຮົມຂອງຂ້ອຍມີຊ່ວງພັກຮຽນ, ເງິນຊ່ວຍເຫຼືອ TOP ຂອງຂ້ອຍຈະຢຸດເຊົາບໍ?

**ບໍ່**, ຖ້າ:

- ຊ່ວງຢຸດພັກຮຽນນັ້ນແມ່ນ **ນ້ອຍກວ່າ 3 ອາທິດ**, ແລະ
- ທ່ານກັບຄືນສູ່ໂປຣແກຣມຝຶກອົບຮົມໃນທັນທີຫຼັງຈາກຊ່ວງຢຸດພັກ.

ຖ້າຊ່ວງຢຸດພັກຮຽນນັ້ນແມ່ນ **ຫຼາຍກວ່າ 3 ອາທິດ**, ແລະທ່ານສືບຕໍ່ຄົ້ນຫາວຽກເຮັດຕາມຂໍ້ກຳນົດ, ທ່ານອາດຈະສາມາດໄດ້ຮັບເງິນຊ່ວຍເຫຼືອປົກກະຕິ ແຕ່ບໍ່ແມ່ນເງິນຊ່ວຍເຫຼືອການຫວ່າງງານສ່ວນຂະຫຍາຍ.

